ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງສຶກສາທິການ ແລະ ກິລາ
ກົມແຜນການ

ເລກທີ 2334 /ຜກ

ນະຄອນຫຼວງວຽງຈັນ, ວັນທີ 25 ກໍລະກົດ 2023

# ບົດລາຍງານ

**ຮຽນ:** ທ່ານລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ, ປະທານ ຄຊພຊ ທີ່ນັບຖື.
**ເລື່ອງ:** ຜົນໄດ້ຮັບກອງປະຊຸມຄົ້ນຄວ້າການທົດລອງດຳເນີນການສຳຫຼວດການສະໜອງ ແລະ ຄວາມຕ້ອງການທັກສະຢູ່ຂັ້ນແຂວງ/ນະຄອນຫຼວງ.

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງສຶກສາທິການ ແລະ ກິລາ ສະບັບເລກທີ 633/ນຍ, ລົງວັນທີ 18 ພະຈິກ 2021;
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະກຳມາທິການແຫ່ງຊາດເພື່ອການພັດທະນາຊັບພະຍາກອນມະນຸດ ສະບັບເລກທີ 143/ນຍ ລົງວັນທີ 08 ພຶດສະພາ 2017;
- ອີງຕາມ ແຜນປະຕິບັດງານຂອງໂຄງການພັດທະນາຂະແໜງການສຶກສາ ເພື່ອການຈ້າງງານ ປີ 2022.

## I. ສະພາບລວມ

ກອງປະຊຸມຄົ້ນຄວ້າ ການທົດລອງດຳເນີນການສຳຫຼວດ ການສະໜອງ ແລະ ຄວາມຕ້ອງການທັກສະຢູ່ຂັ້ນແຂວງ ໄດ້ໄຂຂຶ້ນໃນວັນທີ 10-15 ກໍລະກົດ 2023 ທີ່ ພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ, ພາຍໃຕ້ການຊີ້ນຳ ຂອງ ທ່ານ ປອ ບຸນປັນ ໄຊມຸນຕຣີ, ຫົວໜ້າກົມແຜນການ, ຫົວໜ້າກອງເລຂາ ຄຊພຊ, ໂດຍມອບໝາຍໃຫ້ທ່ານ ວັນທອງ ແພງສະຫວັດ, ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງຫຼວງພະບາງ ແລະ ທ່ານ ພຸດທະວົງ ພູມມະສັກ, ຫົວໜ້າພະແນກຂໍ້ມູນຂ່າວສານຕະຫລາດແຮງງານ, ຕາງໜ້າຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຄະນະດຳເນີນກອງປະຊຸມ; ໂດຍມີບັນດາທ່ານ ຫົວໜ້າພະແນກ, ຮອງຫົວໜ້າພະແນກສຶກສາທິການ ແລະ ກິລາ; ຕາງໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ ຈາກນະຄອນຫຼວງວຽງຈັນ, ແຂວງຈຳປາສັກ, ສະຫວັນນະເຂດ, ຄຳມ່ວນ

ແລະ ແຂວງວຽງຈັນ ພ້ອມດ້ວຍຄະນະກຳມະການພັດທະນາຊັບພະຍາກອນມະນຸດ ແຂວງຫຼວງພະບາງ, ຄະນະວິຊາການ ແລະ ຄະນະຮັບຜິດຊອບກອງປະຊຸມ ລວມທັງໝົດ 39 ທ່ານ, ຍິງ 08 ທ່ານ.

## II. ຈຸດປະສົງ

ຈຸດປະສົງຂອງກອງປະຊຸມ ແມ່ນເພື່ອ:

1) ຮັບຟັງການລາຍງານຜົນຂອງການສຳຫຼວດວິສະຫະກິດ ທີ່ທາງກອງເລຂາ ຄຊພຊ ຮ່ວມກັບຄະນະວິຊາການຄົ້ນຄວ້າຈາກ ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມ, ມະຫາວິທະຍາໄລແຫ່ງຊາດ ແລະ ກອງເລຂາຄະນະກຳມະການພັດທະນາຊັບພະຍາກອນມະນຸດ ຂັ້ນແຂວງ/ນະຄອນ ຫຼວງ ໄດ້ຈັດຕັ້ງປະຕິບັດໃນປີ 2022;
2) ຮັບຟັງ ແລະ ປຶກສາຫາລື ກ່ຽວກັບຈຸດປະສົງ, ເປົ້າໝາຍ, ຂັ້ນຕອນ ແລະ ວິທີການ ຂອງການສຳຫຼວດຄວາມຕ້ອງການທັກສະຂອງຂອງພາກທຸລະກິດເອກະຊົນ ປີ 2023 ທີ່ຈະຈັດຕັ້ງປະຕິບັດໃນ 6 ແຂວງຄື: ແຂວງ ຫຼວງພະບາງ, ວຽງຈັນ, ຄຳມ່ວນ, ສະຫວັນນະເຂດ, ຈຳປາສັກ ແລະ ນະຄອນຫຼວງວຽງຈັນ;
3) ປຶກສາຫາລື ໃນການກະກຽມຄວາມພ້ອມ ກ່ອນການດຳເນີນການສຳຫຼວດຕົວຈິງ ໂດຍສະເພາະ ແຜນວຽກ, ແຜນຄົນ ແລະ ແຜນງົບປະມານ;
4) ປຶກສາຫາລື ກ່ຽວກັບແຕ່ງຕັ້ງ ຄະນະຮັບຜິດຊອບ ການສຳຫຼວດຄວາມຕ້ອງການທັກສະຂອງຂອງ ພາກທຸລະກິດເອກະຊົນ ປີ 2023.

## III. ເນື້ອໃນ

ກອງປະຊຸມໄດ້ຮັບຟັງການນຳສະເໜີກ່ຽວກັບ: (1) ພາບລວມຂອງການສະໜອງ ແລະ ຄວາມຕ້ອງການທັກສະ; (2) ຜົນການສຳຫຼວດຄວາມຕ້ອງການທັກສະຂອງທຸລະກິດພາກເອກະຊົນ ປີ 2022; (3) ຈຸດປະສົງ, ເປົ້າໝາຍ ແລະ ຂັ້ນຕອນ, ວິທີການ ຂອງການສຳຫຼວດຄວາມຕ້ອງການທັກສະຂອງທຸລະກິດພາກເອກະຊົນ ປີ 2023; ແລະ (4) ນຳສະເໜີຊຸດຄຳຖາມໃນການສຳຫຼວດ.

## IV. ປະເມີນຜົນໄດ້ຮັບ

ຜ່ານການຮັບຟັງ, ຄົ້ນຄວ້າ, ປຶກສາຫາລື ແລະ ປະກອບຄຳຄິດເຫັນຢ່າງຕັ້ງໜ້າ, ກົງໄປກົງມາ ແລະ ສ້າງສັນ ຂອງບັນດາຜູ້ເຂົ້າຮ່ວມກອງປະຊຸມໄດ້ມີຄວາມເປັນເອກະພາບໃນຫົວຂໍ້ຕ່າງໆ ດັ່ງນີ້:

1) ເຫັນດີເປັນເອກະພາບຕໍ່ແບບສອບຖາມ ການສຳຫຼວດຄວາມຕ້ອງການທັກສະຂອງທຸລະກິດພາກເອກະຊົນ ແຕ່ມອບໃຫ້ຄະນະຮັບຜິດຊອບປັບປຸງບາງຄຳຖາມ ແລະ ພາສາທີ່ໃຊ້ ໃຫ້ມີຄວາມຊັດເຈນ ແລະ ຖືກຫຼັກໄວຍາກອນຂອງລາວ;
2) ມອບໃຫ້ຄະນະຊ່ຽວຊານ ກະກຽມຮ່າງຄູ່ມືການສຳຫຼວດຄວາມຕ້ອງການທັກສະຂອງທຸລະກິດພາກເອກະຊົນ ໃຫ້ສຳເລັດ ພາຍໃນເດືອນ ກໍລະກົດ 2023;
3) ເຫັນດີ ໃນການກຳນົດເມືອງທີ່ເປັນເປົ້າໝາຍການສຳຫຼວດ ຄື: ນະຄອນຫຼວງວຽງຈັນ 6 ເມືອງ, ຫຼວງພະບາງ 5 ເມືອງ, ວຽງຈັນ 3 ເມືອງ, ຄຳມ່ວນ 4 ເມືອງ, ສະຫວັນນະເຂດ 6 ເມືອງ ແລະ ຈຳປາສັກ 4 ເມືອງ;

4) ສະເໜີໃຫ້ ຫ້ອງການພັດທະນາຊັບພະຍາກອນມະນຸດ ແລະ ຄະນະຊ່ຽວຊານ ປັບປຸງເນື້ອໃນຂອງບົດສະເໜີການສຳຫຼວດ (Proposal) ໃຫ້ມີຄວາມລະອຽດຂຶ້ນຕື່ມ ໂດຍສະເພາະເນື້ອໃນທາງດ້ານວິທີການວິເຄາະ-ວິໄຈ ແລະ ຄວາມສຳພັນຂອງຂໍ້ມູນ ແລະ ຮ່າງຂອງບົດລາຍງານ;

5) ມອບໃຫ້ ກອງເລຂາ ຄຊພຊ ເຮັດໜັງສືແຈ້ງການ ໃນການແຕ່ງຕັ້ງຄະນະຮັບຜິດຊອບການສຳຫຼວດຄວາມຕ້ອງການທັກສະຂອງທຸລະກິດພາກເອກະຊົນ ຂັ້ນແຂວງ/ນະຄອນຫຼວງ ເພື່ອເປັນບ່ອນອີງ ໃຫ້ພາກສ່ວນທີ່ກ່ຽວຂ້ອງ ເພື່ອດຳເນີນການໃນຂັ້ນຕໍ່ໄປ;

6) ມອບໃຫ້ ພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ ເປັນເຈົ້າການ ໃນການຮຽກປະຊຸມເພື່ອຄົ້ນຄວ້າ, ປຶກສາຫາລື ແລະ ວາງແຜນການເກັບກຳຂໍ້ມູນ ຮ່ວມກັບພະແນກການທີ່ກ່ຽວຂ້ອງ ໂດຍສະເພາະແຜນວຽກ, ແຜນຄົນ, ບໍລິສັດ ທີ່ເປັນເປົ້າໝາຍ ແລະ ຜູ້ປະສານງານ;

7) ເຫັນດີ ເປັນເອກະພາບໃນການກຳນົດໄລຍະເວລາ ການເລີ່ມເກັບກຳຂໍ້ມູນ ແລະ ການປ້ອນຂໍ້ມູນ ໃຫ້ສຳເລັດໃນ ເດືອນກັນຍາ 2023;

## V. ແຜນໃນຕໍ່ໜ້າ

ໂດຍຜ່ານການປະເມີນຜົນໄດ້ຮັບຂອງກອງປະຊຸມຄົ້ນຄວ້າການທົດລອງດຳເນີນການສຳຫຼວດການສະໜອງ ແລະ ຄວາມຕ້ອງການທັກສະຢູ່ຂັ້ນແຂວງ/ນະຄອນຫຼວງ ເຫັນໄດ້ວ່າວຽກງານດັ່ງກ່າວແມ່ນມີຄວາມສຳຄັນຫຼາຍ ໃນການເກັບກຳຂໍ້ມູນຄວາມຕ້ອງການຂອງພາກເອກະຊົນ ເພື່ອປະກອບເຂົ້າໃນການວິເຄາະ-ວິໄຈ ແລະ ການວາງແຜນພັດທະນາຊັບພະຍາກອນມະນຸດຂອງຂັ້ນແຂວງ/ນະຄອນຫຼວງ. ນອກຈາກນັ້ນ, ກິດຈະກຳການສຳຫຼວດນີ້ ຍັງຈະເປັນການສ້າງຄວາມເຂັ້ມແຂງໃຫ້ແກ່ຄະນະກຳມະການ ແລະ ກົນໄກການປະສານງານພາຍໃນ. ເພື່ອໃຫ້ບັນລຸໄດ້ ຕາມຄາດໝາຍດັ່ງກ່າວມານີ້, ກອງເລຂາ ຄຊພຊ ມີແຜນການ ຄືດັ່ງນີ້:

1) ດຳເນີນການ ແຈ້ງການ ໃຫ້ແຕ່ງຕັ້ງຄະນະຮັບຜິດຊອບການສຳຫຼວດຄວາມຕ້ອງການທັກສະຂອງທຸລະກິດພາກເອກະຊົນ ຂັ້ນແຂວງ/ນະຄອນຫຼວງ ສຳລັບ 6 ແຂວງເປົ້າໝາຍ;

2) ສະເໜີເອົາແຂວງໄຊຍະບູລີ ເຂົ້າເພີ່ມໃນການສຳຫຼວດຄວາມຕ້ອງການທັກສະຂອງທຸລະກິດພາກເອກະຊົນ ເນື່ອງຈາກແຂວງໄຊຍະບູລີ ມີການແຕ່ງຕັ້ງຄະນະຮັບຜິດຊອບແລ້ວ ແລະ ມີຄວາມຕ້ອງການທີ່ຈະສືບຕໍ່ການຄົ້ນຄວ້າ, ວິເຄາະ-ວິໄຈ ໃນຂົງເຂດດັ່ງກ່າວ;

ດັ່ງນັ້ນ, ຈຶ່ງຮຽນລາຍງານມາຍັງທ່ານເພື່ອຮັບຊາບ ແລະ ຂໍທິດຊີ້ນຳໃນການຈັດຕັ້ງປະຕິບັດດ້ວຍ.

ຫົວໜ້າກົມ

ຫົວໜ້າກອງເລຂາ ຄຊພຊ

26.7-2023

ປອ. ບຸນປັນ ໄຊມຸນຕຣີ